ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 241 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 37/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 17/ຄປຈ, ລົງວັນທີ 15 ທັນວາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 37 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 15 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 10 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍຊາຍແດນແຫ່ງຊາດ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານຊາຍແດນແຫ່ງຊາດ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນ ເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ແລະ ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ, ສ້າງຊາຍແດນແຫ່ງຊາດ ໃຫ້ເປັນຊາຍແດນແຫ່ງສັນຕິພາບ, ສະຖຽນລະພາບ, ມິດຕະພາບ, ການຮ່ວມມື ແລະ ການພັດທະນາ ແບບຍືນຍົງກັບປະເທດໃກ້ຄຽງ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ຊາຍແດນແຫ່ງຊາດ

ຊາຍແດນແຫ່ງຊາດ ແມ່ນ ເສັ້ນ ແລະ ທີ່ຕັ້ງສາກຕາມເສັ້ນດັ່ງກ່າວ ທີ່ກຳນົດຂອບເຂດດິນແດນ ເທິງໜ້າດິນ, ພື້ນດິນ, ປານນ້ຳ ແລະ ປານຟ້າ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຊາຍແດນແຫ່ງຊາດ ຖືກກຳນົດດ້ວຍ ສົນທິສັນຍາ ກ່ຽວກັບຊາຍແດນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ປະເທດໃກ້ຄຽງ ເປັນພາຄີ ແລະ ລະບົບຫຼັກໝາຍຊາຍແດນ ຢູ່ພູມີປະເທດຕົວຈິງ. ໃນກໍລະນີຊາຍແດນແຫ່ງຊາດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບປະເທດໃກ້ຄຽງໃດໜຶ່ງ ຍັງບໍ່ທັນຖືກກຳນົດຢ່າງເປັນທາງການ ຕາມກົດໝາຍສາກົນ ຕ້ອງສ້າງສົນທິສັນຍາກັບປະເທດໃກ້ຄຽງດັ່ງກ່າວ ເພື່ອກຳນົດຊາຍແດນແຫ່ງຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສົນທິສັນຍາ ກ່ຽວກັບຊາຍແດນ** ໝາຍເຖິງ ສົນທິສັນຍາ ທີ່ ສປປ ລາວ ແລະ ປະເທດ ໃກ້ຄຽງ ເປັນພາຄີ ທີ່ກຳນົດເສັ້ນຊາຍແດນແຫ່ງຊາດ ລວມທັງແຜນທີ່ຊາຍແດນ ແລະ ອະນຸສັນຍາ ຊຶ່ງເປັນເອກະສານແນບຕິດ ແລະ ເປັນສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກສົນທິສັນຍາດັ່ງກ່າວ;

2. **ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ** ໝາຍເຖິງ ສົນທິສັນຍາ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງ ເປັນພາຄີ ທີ່ກຳນົດກ່ຽວກັບລະບຽບການຄຸ້ມຄອງຊາຍແດນ, ດ່ານຊາຍແດນ ແລະ ບໍລິເວນຊາຍແດນ ລວມທັງສົນທິສັນຍາອື່ນ ທີ່ ສປປ ລາວ ເປັນພາຄີ;

3. **ຫຼັກໝາຍຊາຍແດນ** ໝາຍເຖິງ ເຄື່ອງໝາຍທີ່ເປັນວັດຖຸ ທີ່ນຳໃຊ້ເພື່ອໝາຍ ແລະ ສະແດງໃຫ້ເຫັນທິດເນັ້ງຂອງເສັ້ນຊາຍແດນແຫ່ງຊາດ ຢູ່ພູມີປະເທດຕົວຈິງ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາກ່ຽວກັບຊາຍແດນ;

4. **ຊາຍແດນແຫ່ງຊາດພື້ນດິນ** ໝາຍເຖິງ ທິດຕັ້ງສາກແຕ່ຊາຍແດນແຫ່ງຊາດເທິງໜ້າດິນລົງໄປພື້ນດິນ;

5. **ຊາຍແດນແຫ່ງຊາດເທິງອາກາດ** ໝາຍເຖິງ ທິດຕັ້ງສາກ ແຕ່ຊາຍແດນແຫ່ງຊາດເທິງໜ້າດິນຂຶ້ນໄປປານຟ້າ;

6. **ບໍລິເວນຊາຍແດນ** ໝາຍເຖິງ ເຂດການປົກຄອງຂັ້ນບ້ານ ທີ່ມີເຂດແດນສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ. ການກຳນົດຂອບເຂດບໍລິເວນຊາຍແດນ ໃຫ້ນັບແຕ່ຊາຍແດນແຫ່ງຊາດເຂົ້າມາຈົນສຸດເຂດການປົກຄອງຂອງບ້ານ ທີ່ມີເຂດແດນສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ;

7. **ເຂດຫວງຫ້າມ** ໝາຍເຖິງ ເນື້ອທີ່ສ່ວນໜຶ່ງຢູ່ບໍລິເວນຊາຍແດນ ຊຶ່ງຖືກກຳນົດ ເພື່ອຄຸ້ມຄອງ, ປ້ອງກັນ ແລະ ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ລວມທັງສະກັດກັ້ນ ແລະ ຕ້ານການແຊກແຊງ, ທຳລາຍ, ຂຸດຄົ້ນ, ເກັບກຳຄວາມລັບຂອງຊາດ;

8. **ນ່ານນ້ຳ** ໝາຍເຖິງ ສ່ວນໜຶ່ງຂອງແມ່ນ້ຳຊາຍແດນ ທີ່ເປັນດິນແດນຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ກ່ຽວກັບຊາຍແດນ;

9. **ແມ່ນ້ຳຊາຍແດນ** ໝາຍເຖິງ ສ່ວນໜຶ່ງຂອງແມ່ນ້ຳ ຫຼື ຫ້ວຍນ້ຳ ທີ່ໄຫຼຜ່ານ ຫຼື ໄຫຼຕາມ ເສັ້ນຊາຍແດນແຫ່ງຊາດ ຊຶ່ງເປັນສ່ວນໜຶ່ງຂອງເສັ້ນຊາຍແດນແຫ່ງຊາດເທິງແຜ່ນດິນ (National Land Border) ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາກ່ຽວກັບຊາຍແດນ;

10. **ດ່ານ** ໝາຍເຖິງ ສະຖານທີ່ ຄວບຄຸມ, ກວດກາການ ເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕາມເສັ້ນທາງທີ່ໄດ້ກຳນົດໄວ້ ຊຶ່ງລວມມີ ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ;

11. **ດ່ານຊາຍແດນ** ໝາຍເຖິງ ສະຖານທີ່ ຄວບຄຸມ, ກວດກາການ ເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕາມເສັ້ນທາງ ທາງລົດ, ທາງລົດໄຟ ແລະ ທາງນ້ຳ ທີ່ໄດ້ກຳນົດໄວ້;

12. **ດ່ານສະໜາມບິນສາກົນ** ໝາຍເຖິງ ສະຖານທີ່ ຄວບຄຸມ, ກວດກາການ ເຂົ້າ-ອອກຂອງບຸກຄົນ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕາມເສັ້ນທາງບິນທີ່ໄດ້ກຳນົດໄວ້;

13. **ບໍລິເວນດ່ານຊາຍແດນ** ໝາຍເຖິງ ເນື້ອທີ່ສ່ວນໜຶ່ງ ຢູ່ບໍລິເວນຊາຍແດນ ຊຶ່ງມີເຂດແດນການປົກຄອງສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ ໃນນັ້ນລວມມີສະຖານທີ່ເຮັດວຽກສະເພາະຂອງໜ່ວຍງານຄຸ້ມຄອງລັດຕາມຂະແໜງການ ແລະ ການດຳເນີນກິດຈະການຕ່າງໆ ຢູ່ບໍລິເວນດ່ານຊາຍແດນ ແລະ ມີປ້າຍຊີ້ບອກ ບໍລິເວນດ່ານ;

14. **ຈຸດຜ່ານຊາຍແດນຊົ່ວຄາວ** ໝາຍເຖິງ ສະຖານທີ່ ທີ່ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານຂອງປະເທດໃກ້ຄຽງ ຕົກລົງເປີດ ເພື່ອອຳນວຍຄວາມສະດວກໃຫ້ການເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ ແລະ ການນຳເຂົ້າ-ສົ່ງອອກ, ສົ່ງຜ່ານ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ໃນກໍລະນີມີຄວາມຈຳເປັນ ຫຼື ສຸກເສີນ;

15. **ການປ້ອງກັນຊາຍແດນ** ໝາຍເຖິງ ທຸກການເຄື່ອນໄຫວ ແລະ ມາດຕະການ ໃນການປົກປັກຮັກສາເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ແລະ ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ດ້ວຍກຳລັງແຮງສັງລວມຂອງທົ່ວປວງຊົນ;

16. **ການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ** ໝາຍເຖິງ ການສ້າງປັດໃຈ ແລະ ເງື່ອນໄຂຮອບດ້ານໃຫ້ແກ່ການ ຄຸ້ມຄອງ, ປ້ອງກັນຊາຍແດນ ເພື່ອປົກປັກຮັກສາເອກະລາດ, ອະທິປະໄຕ, ສະຖຽນລະພາບທາງດ້ານການເມືອງ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນ;

17. **ໜ່ວຍງານຄຸ້ມຄອງລັດຕາມຂະແໜງການປະຈຳຢູ່ດ່ານ** ໝາຍເຖິງ ໜ່ວຍງານປະຈຳ ຢູ່ດ່ານທີ່ປະຕິບັດພາລະບົດບາດ ແລະ ໜ້າທີ່ ຕາມລະບຽບການໃນການຄວບຄຸມ, ກວດກາ ການເຂົ້າ-ອອກ ຂອງບຸກຄົນ, ຍານພາຫະນະ, ເຮືອບິນ ແລະ ການນຳເຂົ້າ-ສົ່ງອອກ, ສົ່ງຜ່ານ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຊຶ່ງລວມມີ ໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງ, ພາສີ, ກັກກັນ ພືດ-ສັດ, ອາຫານ ແລະ ຢາ, ຄວບຄຸມພະຍາດຕິດຕໍ່ ແລະ ໜ່ວຍງານອື່ນທີ່ກ່ຽວຂ້ອງ;

18. **ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ** ໝາຍເຖິງ ບຸກຄົນທີ່ບໍ່ໄດ້ຖືສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດລາວ;

19. **ປະຊາຊົນຊາຍແດນ** ໝາຍເຖິງ ພົນລະເມືອງລາວ ທີ່ຈົດທະບຽນສຳມະໂນຄົວ ຢູ່ບໍລິເວນຊາຍແດນ;

20. **ຍານພາຫະນະ** ໝາຍເຖິງ ພາຫະນະຄົມມະນາຄົມທາງບົກ, ທາງລົດໄຟ ແລະ ທາງນ້ຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ລວມທັງສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

21. **ຍານພາຫະນະການບິນ** ໝາຍເຖິງ ເຮືອບິນ, ເຮລິຄອບເຕີ, ບາລູນ, ເຮືອບິນບໍ່ມີຄົນຂັບ ແລະ ອຸປະກອນການບິນອື່ນ ທີ່ສາມາດຊູຕົວ ແລະ ເຄື່ອນຍ້າຍໄດ້;

22. **ວັດຖຸພັນ** ໝາຍເຖິງ ຜະລິດຕະພັນທາງດ້ານວັດຖຸ ທີ່ນຳເຂົ້າ-ສົ່ງອອກ ຜ່ານຊາຍແດນແຫ່ງຊາດທີ່ບໍ່ແມ່ນເປົ້າໝາຍທາງດ້ານການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

23. **ໂຄງການຊາຍແດນ** ໝາຍເຖິງ ໂຄງການທີ່ເຮັດໃຫ້ເສັ້ນຊາຍແດນແຫ່ງຊາດໝັ້ນຄົງ ແລະ ໂຄງການຮັບໃຊ້ໃຫ້ແກ່ການເຄື່ອນໄຫວຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

24. **ເຫດສຸດວິໄສ** ໝາຍເຖິງ ເຫດການທີ່ບໍ່ສາມາດ ຄາດຄະເນ ແລະ ຄວບຄຸມໄດ້;

25. **ອົງການຂັ້ນສູນກາງ** ໝາຍເຖິງ ອົງການຈັດຕັ້ງພັກ ແລະ ລັດຂັ້ນສູນກາງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;

26. **ອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ** ໝາຍເຖິງ ພະແນກ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ, ອົງການປົກຄອງບ້ານ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນທ້ອງຖິ່ນ ແລະ ກຳລັງປະກອບອາວຸດປະຊາຊົນຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ;

27. **ປະເທດໃກ້ຄຽງ** ໝາຍເຖິງ ປະເທດທີ່ມີຊາຍແດນຕິດກັບ ສປປ ລາວ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຊາຍແດນແຫ່ງຊາດ

ລັດ ສ້າງຊາຍແດນແຫ່ງຊາດ ໃຫ້ເປັນຊາຍແດນແຫ່ງສັນຕິພາບ, ສະຖຽນລະພາບ, ມິດຕະພາບ, ການຮ່ວມມື ແລະ ການພັດທະນາ ແບບຍືນຍົງກັບປະເທດໃກ້ຄຽງ.

ລັດ ມີນະໂຍບາຍສົ່ງເສີມ ໃນການສ້າງບໍລິເວນຊາຍແດນ ໃຫ້ມີຄວາມເຂັ້ມແຂງ ທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນຊາຍແດນໃຫ້ດີຂຶ້ນ; ສ້າງໂຄງການຊາຍແດນ ແລະ ກຳລັງຫຼັກແຫຼ່ງ ເພື່ອຮັບປະກັນໃຫ້ແກ່ການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ໃນທຸກສະພາບການ.

## ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວວຽກງານຊາຍແດນແຫ່ງຊາດ

ການເຄື່ອນໄຫວວຽກງານຊາຍແດນແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດແນວທາງ ນະໂຍບາຍການຕ່າງປະເທດ ແລະ ພາຍໃນຂອງ ສປປ ລາວ;

2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍຂອງ ສປປ ລາວ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົດໝາຍສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ເຄົາລົບ ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ຊຸກຍູ້ກັນ, ບໍ່ຂົ່ມຂູ່ດ້ວຍກຳລັງ ຫຼື ນຳໃຊ້ກຳລັງ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ແລະ ຫຼັກການພື້ນຖານອື່ນຂອງກົດໝາຍສາກົນ;

4. ແກ້ໄຂບັນຫາຊາຍແດນ ແລະ ດິນແດນ ດ້ວຍສັນຕິວິທີ ໂດຍສອດຄ່ອງກັບກົດໝາຍສາກົນ;

5. ຮັບປະກັນຜົນປະໂຫຍດຂອງຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ.

## ມາດຕາ 6 ຄວາມສຳຄັນຂອງການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ

ຊາຍແດນແຫ່ງຊາດ ແມ່ນ ເສັ້ນທີ່ກຳນົດຂອບເຂດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງເປັນສິ່ງທີ່ເຄົາລົບ ແລະ ບໍ່ສາມາດລ່ວງລະເມີດໄດ້.

ການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ມີຄວາມສຳຄັນເປັນພິເສດຕໍ່ການປົກປັກຮັກສາອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ ແລະ ເປັນໜ້າທີ່ຂອງລັດ ແລະ ພົນທະຂອງພົນລະເມືອງລາວທຸກຄົນ.

ລັດ ແລະ ພົນລະເມືອງລາວທຸກຄົນ ມີ ໜ້າທີ່ ແລະ ພັນທະ ໃນການພັດທະນາເສດຖະກິດ-ສັງຄົມ ສົມທົບ ແໜ້ນກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນກັບຕ່າງປະເທດ ຢູ່ບໍລິເວນຊາຍແດນ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບວຽກງານຊາຍແດນແຫ່ງຊາດ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ຊຸກຍູ້, ສົ່ງເສີມການພົວພັນຮ່ວມມືກັບສາກົນ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ດ້ວຍການເຂົ້າຮ່ວມກອງປະຊຸມ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ການຝຶກອົບຮົມ, ສຳມະນາ ຍົກລະດັບຄວາມຮູ້, ຄວາມສາມາດ ດ້ານວິຊາການ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ, ປະຕິບັດສົນທິສັນຍາກ່ຽວກັບຊາຍແດນ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ລະບຽບການ ກ່ຽວກັບຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ

**ມາດຕາ 9 ລະບຽບການກ່ຽວກັບຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ**

ລະບຽບການກ່ຽວກັບຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ມີ ດັ່ງນີ້:

1. ການເຂົ້າ-ອອກ ຜ່ານຊາຍແດນແຫ່ງຊາດ;
2. ການ ເປີດ, ປິດ, ຍົກລະດັບ ຫຼື ຫຼຸດລະດັບ ດ່ານ;
3. ການກຳນົດເຂດຄວບຄຸມ, ກວດກາ ຢູ່ດ່ານ;
4. ການບິນຜ່ານຊາຍແດນແຫ່ງຊາດ ແລະ ນ່ານຟ້າຂອງ ສປປ ລາວ ຂອງຍານພາຫະນະການບິນ;
5. ການຈຳກັດ ຫຼື ຢຸດຕິຊົ່ວຄາວ ການເຂົ້າ-ອອກ ຜ່ານຊາຍແດນແຫ່ງຊາດ;
6. ການຜ່ານຊາຍແດນແຫ່ງຊາດຂອງຍານພາຫະນະການບິນ ແລະ ເຮືອ ໃນກໍລະນີເກີດເຫດສຸດວິໄສ;
7. ການຄຸ້ມຄອງ ແລະ ນຳໃຊ້ແມ່ນ້ຳຊາຍແດນ;
8. ໂຄງການການພັດທະນາ ຢູ່ບໍລິເວນຊາຍແດນ ທີ່ກ່ຽວຂ້ອງກັບຊາຍແດນແຫ່ງຊາດ;
9. ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ.

**ມາດຕາ 10 ການເຂົ້າ-ອອກ ຜ່ານຊາຍແດນແຫ່ງຊາດ**

ການເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕ້ອງປະຕິບັດຕາມເສັ້ນທາງ ທາງລົດ, ທາງລົດໄຟ, ທາງນ້ຳ ແລະ ເສັ້ນທາງ

ບິນ ທີ່ໄດ້ກຳນົດໄວ້ ແລະ ຕ້ອງດຳເນີນຢູ່ດ່ານ, ມີເອກະສານຖືກຕ້ອງ ແລະ ຕ້ອງໄດ້ຜ່ານການຄວບຄຸມ, ກວດກາຂອງໜ່ວຍງານຄຸ້ມຄອງລັດຕາມຂະແໜງການປະຈຳຢູ່ດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການເຂົ້າ-ອອກ, ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນຂອງປະຊາຊົນຊາຍແດນ ຜ່ານຊາຍແດນແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ກຳນົດ ເສັ້ນທາງ ທາງລົດ, ທາງລົດໄຟ, ທາງນ້ຳ ແລະ ເສັ້ນທາງບິນ ຜ່ານຊາຍແດນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 11 ການເປີດ, ປິດ, ຍົກລະດັບ ຫຼື ຫຼຸດລະດັບ ດ່ານ**

ລັດຖະບານ ເປັນຜູ້ຕົກລົງ ເປີດ, ປິດ, ຍົກລະດັບ ຫຼື ຫຼຸດລະດັບ ດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

ລັດຖະບານ ເປັນຜູ້ຕົກລົງ ເປີດ ແລະ ປິດ ຈຸດຜ່ານຊາຍແດນຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

ການເຂົ້າ-ອອກ, ການພັກເຊົາຊົ່ວຄາວ ແລະ ການເຄື່ອນໄຫວ ຢູ່ບໍລິເວນດ່ານ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ການກຳນົດເຂດຄວບຄຸມ, ກວດກາ ຢູ່ດ່ານ**

ເຂດຄວບຄຸມ, ກວດກາ ໄດ້ຮັບການກຳນົດຢູ່ແຕ່ລະດ່ານ ເພື່ອອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານຄຸ້ມຄອງລັດຕາມຂະແໜງການປະຈຳຢູ່ດ່ານ ໃນການຄວບຄຸມ, ກວດກາ ແລະ ດຳເນີນຕາມຂັ້ນຕອນ ການເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ການບິນຜ່ານຊາຍແດນແຫ່ງຊາດ ແລະ ນ່ານຟ້າຂອງ ສປປ ລາວ ຂອງຍານພາຫະນະການບິນ**

ຍານພາຫະນະການບິນ ສາມາດບິນຜ່ານຊາຍແດນແຫ່ງຊາດ ແລະ ນ່ານຟ້າຂອງ ສປປ ລາວ ພາຍຫຼັງໄດ້ຮັບການອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ຕ້ອງປະຕິບັດຕາມການບັນຊາ, ຄວບຄຸມ ແລະ ແນະນຳຂອງອົງການຄຸ້ມຄອງວຽກງານການບິນຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 14 ການຈຳກັດ ຫຼື ຢຸດຕິຊົ່ວຄາວ ການເຂົ້າ-ອອກ ຜ່ານຊາຍແດນແຫ່ງຊາດ**

ການເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກ, ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ອາດຈະຖືກຈຳກັດ ຫຼື ຢຸດຕິຊົ່ວຄາວ ຍ້ອນເຫດຜົນດ້ານຄວາມໝັ້ນຄົງຂອງ

ຊາດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປ້ອງກັນພະຍາດຕິດຕໍ່ ຄົນ, ສັດ ແລະ ສັດຕູພືດ ທີ່ລະບາດຮ້າຍແຮງ, ເຫດສຸດວິໄສ ແລະ ເຫດຜົນຈໍາເປັນຮີບດ່ວນອື່ນ ຫຼື ຕາມການສະເໜີຂອງປະເທດທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ກໍານົດລະບຽບການ ກ່ຽວກັບການຈໍາກັດ ຫຼື ຢຸດຕິຊົ່ວຄາວ ການເຂົ້າ-ອອກຂອງບຸກຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນໍາເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຜ່ານຊາຍແດນແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງມາດຕານີ້. ການຈໍາກັດ ຫຼື ຢຸດຕິຊົ່ວຄາວດັ່ງກ່າວ ຕ້ອງແຈ້ງໃຫ້ລັດຖະບານຂອງປະເທດທີ່ກ່ຽວຂ້ອງ ຜ່ານທາງການທູດ ລວມທັງແຈ້ງໃຫ້ເຈົ້າໜ້າທີ່, ອົງການປົກຄອງທ້ອງຖິ່ນຂອງປະເທດທີ່ກ່ຽວຂ້ອງນັ້ນເພື່ອຊາບ.

**ມາດຕາ 15 ການຜ່ານຊາຍແດນແຫ່ງຊາດຂອງຍານພາຫະນະການບິນ ແລະ ເຮືອ ໃນກໍລະນີເກີດເຫດສຸດວິໄສ**

ໃນກໍລະນີ ຍານພາຫະນະການບິນ ແລະ ເຮືອ ເກີດອຸປະຕິເຫດ, ເຫດຂັດຂ້ອງທາງດ້ານເຕັກນິກ, ເຫດສຸກເສີນ ຫຼື ເຫດຈໍາເປັນຮີບດ່ວນອື່ນ ແລະ ຈໍາເປັນຕ້ອງຜ່ານຊາຍແດນແຫ່ງຊາດ ໂດຍບໍ່ສາມາດປະຕິບັດຕາມກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໄດ້ນັ້ນ, ຜູ້ຄວບຄຸມຍານພາຫະນະການບິນ ແລະ ເຮືອດັ່ງກ່າວຕ້ອງແຈ້ງໃຫ້ອົງການທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ ຢູ່ສະໜາມບິນ ແລະ ທ່າເຮືອ, ໜ່ວຍງານກູ້ໄພ ແລະ ຊ່ວຍເຫຼືອແຫ່ງຊາດ, ອົງການຄຸ້ມຄອງວຽກງານການບິນ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ ທີ່ໃກ້ທີ່ສຸດ ໃນທັນທີ ແລະ ຕ້ອງປະຕິບັດຕາມຄໍາແນະນໍາຂອງອົງການດັ່ງກ່າວ.

**ມາດຕາ 16 ການຄຸ້ມຄອງ ແລະ ການນໍາໃຊ້ແມ່ນໍ້າຊາຍແດນ**

ການຄຸ້ມຄອງ ແລະ ນໍາໃຊ້ແມ່ນໍ້າຊາຍແດນ ເປັນຕົ້ນ ການປູກຝັງ, ການລ້ຽງສັດ, ການຂຸດຄົ້ນຊັບພະຍາກອນນໍ້າ, ການກໍ່ສ້າງໂຄງການ, ການຄົມມະນາຄົມ, ການຮ່ວມມືວັດແທກຜູ້ມີປະເທດ, ອຸທົກກະສາດ ແລະ ກິດຈະກໍາອື່ນທີ່ກ່ຽວຂ້ອງກັບແມ່ນໍ້າຊາຍແດນ ໃຫ້ປະຕິບັດຕາມ ກົດໝາຍ, ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ຕ້ອງຄຸ້ມຄອງ, ນໍາໃຊ້ ແລະ ປົກປັກຮັກສາແມ່ນໍ້າຊາຍແດນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ສົນທິສັນຍາກ່ຽວກັບລະບຽບການຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 17 ໂຄງການການພັດທະນາ ຢູ່ບໍລິເວນຊາຍແດນທີ່ກ່ຽວຂ້ອງກັບຊາຍແດນແຫ່ງຊາດ**

ໂຄງການການພັດທະນາ ຢູ່ບໍລິເວນຊາຍແດນທີ່ກ່ຽວຂ້ອງກັບຊາຍແດນແຫ່ງຊາດ ຕ້ອງປະຕິບັດຕາມແຜນການທີ່ໄດ້ຮັບຮອງຈາກອົງການທີ່ມີສິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບສົນທິສັນຍາກ່ຽວກັບລະບຽບການຊາຍແດນ. ການຈັດຕັ້ງປະຕິບັດໂຄງການ ຕ້ອງໃຫ້ສອດຄ່ອງກັບລະບຽບການ ກ່ຽວກັບບໍລິເວນຊາຍແດນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງບໍ່ສົ່ງຜົນກະທົບຕໍ່ການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ.

**ມາດຕາ 18 ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ**

ທຸກການເຄື່ອນໄຫວ ຢູ່ ເຂດທ່ອງທ່ຽວ, ເຂດບໍລິການ, ເຂດການຄ້າ ແລະ ເຂດເສດຖະກິດ ຢູ່ບໍລິເວນດ່ານ, ເຂດເສດຖະກິດພິເສດ ຢູ່ບໍລິເວນຊາຍແດນ ຕ້ອງປະຕິບັດຕາມລະບຽບການ ກ່ຽວກັບບໍລິເວນຊາຍແດນ, ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ພາກທີ III
## ການສ້າງ, ຄຸ້ມຄອງ ແລະ ປ້ອງກັນ ຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ

**ມາດຕາ 19 ການສ້າງແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ພັດທະນາບໍລິເວນຊາຍແດນ**

ລັດ ຕ້ອງສ້າງ ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ພັດທະນາບໍລິເວນຊາຍແດນ ໃຫ້ເຂັ້ມແຂງທາງດ້ານ ການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລວມທັງມີບຸລິມະສິດໃນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ປະຊາຊົນຊາຍແດນ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ຕ້ອງສ້າງແຜນປະຈຳປີ ເພື່ອພັດທະນາເສດຖະກິດ-ສັງຄົມ, ການກໍ່ສ້າງໂຄງລ່າງພື້ນຖານ ແລະ ການບໍລິການສາທາລະນະ, ການຈັດສັນພູມລຳເນົາ ແລະ ອາຊີບ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ແລະ ສະເໜີຂໍຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີລັດຖະບານພິຈາລະນາຕົກລົງ.

**ມາດຕາ 20 ການສ້າງໂຄງການຊາຍແດນ**

ໂຄງການຊາຍແດນ ຖືເປັນໂຄງການລົງທຶນບຸລິມະສິດ ຕາມແຜນການ ແລະ ຕ້ອງໄດ້ຮັບການຮັບຮອງຈາກອົງການທີ່ມີສິດທີ່ກ່ຽວຂ້ອງ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນແຂວງ ເປັນເຈົ້າການສ້າງໂຄງການຊາຍແດນປະຈຳປີ ທີ່ເຮັດໃຫ້ເສັ້ນຊາຍແດນແຫ່ງຊາດໝັ້ນຄົງ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ແລະ ສະເໜີຂໍຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີລັດຖະບານ ພິຈາລະນາຕົກລົງ. ສຳລັບໂຄງການທີ່ກ່ຽວຂ້ອງກັບການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນ, ການປັກຫຼັກໝາຍຊາຍແດນຄືນໃໝ່, ບູລະນະ ແລະ ສ້ອມແປງຫຼັກໝາຍຊາຍແດນ ໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການ.

ກະຊວງປ້ອງກັນປະເທດ ເປັນເຈົ້າການສ້າງໂຄງການຊາຍແດນປະຈຳປີ ທີ່ຮັບໃຊ້ໃຫ້ແກ່ການເຄື່ອນໄຫວຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ສະເໜີຂໍຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີລັດຖະບານ ພິຈາລະນາຕົກລົງ.

ໂຄງການຊາຍແດນ ຕ້ອງໄດ້ຮັບການຄຸ້ມຄອງ, ປ້ອງກັນ ແລະ ປົກປັກຮັກສາ ຢ່າງເຂັ້ມງວດ.

**ມາດຕາ 21 ການສ້າງ ແລະ ຄຸ້ມຄອງຫຼັກໝາຍຊາຍແດນ**

ຫຼັກໝາຍຊາຍແດນ ຖືກກຳນົດ ແລະ ປັກ ຕາມສົນທິສັນຍາ ກ່ຽວກັບຊາຍແດນທີ່ກຳນົດເສັ້ນຊາຍແດນແຫ່ງຊາດ ຢູ່ພູມີປະເທດຕົວຈິງ ຊຶ່ງຕ້ອງໄດ້ຮັບການປ້ອງກັນ ແລະ ປົກປັກຮັກສາ ໃຫ້ຖືກຕ້ອງ ຕາມຈຸດທີ່ຕັ້ງ, ຮູບຮ່າງ, ຂະໜາດ, ເຄື່ອງໝາຍ, ຕົວອັກສອນ ແລະ ສີ ທີ່ໄດ້ກຳນົດໄວ້.

ເມື່ອພົບເຫັນ ຫຼື ໄດ້ຮັບຂໍ້ມູນ ກ່ຽວກັບຫຼັກໝາຍຊາຍແດນເປ່ເພ, ສູນຫາຍ ຫຼື ປ່ຽນຈຸດທີ່ຕັ້ງ ກົມກອງທະຫານຊາຍແດນທີ່ຮັບຜິດຊອບ ຕ້ອງລາຍງານໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ແລະ ອົງການທີ່ມີສິດທີ່ກ່ຽວຂ້ອງ ພ້ອມທັງແຈ້ງໃຫ້ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງປະເທດໃກ້ຄຽງໂດຍດ່ວນ ເພື່ອປະສານສົມທົບກັນແກ້ໄຂ ຕາມສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ.

ການປັກຫຼັກໝາຍຊາຍແດນຄືນໃໝ່, ບູລະນະ, ສ້ອມແປງ ແລະ ບຳລຸງຮັກສາ ຫຼັກໝາຍຊາຍແດນ ຕ້ອງປະຕິບັດຕາມສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ.

**ມາດຕາ 22 ການລົງທຶນພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ**

ການລົງທຶນພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການສາທາລະນະ ຢູ່ບໍລິເວນຊາຍແດນ ຕ້ອງປະຕິບັດຕາມແນວທາງ, ແຜນນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງ ແຂວງ, ນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນແຕ່ລະໄລຍະ ເພື່ອຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນຊາຍແດນ ແລະ ຕ້ອງຕິດພັນກັບການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ເປັນຜູ້ສ້າງແຜນການລົງທຶນພັດທະນາເສດຖະກິດ-ສັງຄົມ ປະຈຳປີ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ, ການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ແລະ ສະເໜີຂໍຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີ ລັດຖະບານ ແລະ ອົງການທີ່ມີສິດກ່ຽວຂ້ອງ ພິຈາລະນາຕົກລົງ.

**ມາດຕາ 23 ການກໍ່ສ້າງຮາກຖານການເມືອງ ຢູ່ບໍລິເວນຊາຍແດນ**

ຮາກຖານການເມືອງ ຢູ່ບໍລິເວນຊາຍແດນ ຕ້ອງໄດ້ຮັບການກໍ່ສ້າງ, ປັບປຸງ ແລະ ບູລະນະ ໃຫ້ເຂັ້ມແຂງເປັນປົກກະຕິ ຕາມແນວທາງ ນະໂຍບາຍຂອງພັກ ແລະ ລັດ; ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ ໃນການນຳພາ, ຄຸ້ມຄອງ ແລະ ສ້າງບໍລິເວນຊາຍແດນ ລວມທັງການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ສຳລັບວິທີການສ້າງແຜນການ ກ່ຽວກັບການກໍ່ສ້າງຮາກຖານການເມືອງຢູ່ບໍລິເວນຊາຍແດນ ລວມທັງການຄັດເລືອກ ແລະ ບຳລຸງຍົກລະດັບ ພະນັກງານຮາກຖານການເມືອງ ຢູ່ບໍລິເວນຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 ການຈັດສັນພູມລຳເນົາ ແລະ ອາຊີບ ຢູ່ບໍລິເວນຊາຍແດນ**

ການສ້າງແຜນການ ກ່ຽວກັບການຈັດສັນພູມລຳເນົາ ແລະ ອາຊີບ ຢູ່ບໍລິເວນຊາຍແດນ ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເງື່ອນໄຂທາງດ້ານທຳມະຊາດ, ຈຸດພິເສດ ແລະ ລັກສະນະສະເພາະຂອງແຕ່ລະເຂດ, ແຕ່ລະຊົນເຜົ່າ ແລະ ແຕ່ລະທ້ອງຖິ່ນ. ແຜນການດັ່ງກ່າວ ຕ້ອງຮັບປະກັນການປູກລະດົມ ແລະ ນຳໃຊ້ແຮງງານ ຢູ່ບໍລິເວນຊາຍແດນຢ່າງເໝາະສົມ ເຂົ້າໃນການຜະລິດສະບຽງອາຫານ ແລະ ເປັນສິນຄ້າ ເພື່ອສົ່ງອອກ ແລະ

ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໃນການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ.

ລັດ ມີນະໂຍບາຍທີ່ເໝາະສົມ ເພື່ອຈັດສັນພູມລຳເນົາໃຫ້ປະຊາຊົນດຳລົງຊີວິດຢ່າງໝັ້ນຄົງ ຢູ່ບໍລິເວນຊາຍແດນ; ຊຸກຍູ້ ແລະ ແຕ່ງຕັ້ງ ພະນັກງານ-ລັດຖະກອນ ໄປປະຕິບັດໜ້າທີ່ໄລຍະຍາວ; ຊຸກຍູ້ໃຫ້ຜູ້ທີ່ສະໝັກໃຈໄປດຳລົງຊີວິດ ຢູ່ບໍລິເວນຊາຍແດນ ໂດຍສະເພາະແມ່ນບ່ອນທີ່ມີຄວາມຫຍຸ້ງຍາກ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຄົ້ນຄວ້າສ້າງແຜນການ ກ່ຽວກັບການຈັດສັນພູມລຳເນົາ ແລະ ອາຊີບ ຢູ່ບໍລິເວນຊາຍແດນ ແລະ ສະເໜີຂໍ້ຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີລັດຖະບານ ພິຈາລະນາຕົກລົງ.

**ມາດຕາ 25 ການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ**

ການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ ຕ້ອງໄດ້ຮັບການສ້າງໃຫ້ເຂັ້ມແຂງ ແລະ ໜັກແໜ້ນ ບົນພື້ນຖານການສ້າງຮາກຖານການເມືອງ, ການພັດທະນາເສດຖະກິດ-ສັງຄົມ, ການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນ ໃຫ້ເຂັ້ມແຂງ.

ກະຊວງປ້ອງກັນປະເທດ ເປັນຜູ້ແນະນຳການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ. ອົງການປົກຄອງທ້ອງຖິ່ນ ຕ້ອງປະສານສົມທົບ ແລະ ຮ່ວມມື ກັບກະຊວງປ້ອງກັນປະເທດ ກ່ຽວກັບການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 26 ກຳລັງຫຼັກແຫຼ່ງ ແລະ ການກໍ່ສ້າງກຳລັງຫຼັກແຫຼ່ງໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ**

ທະຫານຊາຍແດນ ແມ່ນ ກຳລັງຫຼັກແຫຼ່ງທີ່ຮັບຜິດຊອບ ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ ແລະ ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງບັນຊາການທະຫານຊາຍແດນ ເປັນເສນາທິການໃຫ້ກະຊວງປ້ອງກັນປະເທດ ໃນການຄຸ້ມຄອງ, ບັນຊາ ແລະ ກໍ່ສ້າງທະຫານຊາຍແດນໂດຍກົງ, ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ຕາມກົດໝາຍ.

ກະຊວງປ້ອງກັນປະເທດ ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງວຽກງານການກໍ່ສ້າງ ແລະ ການເຄື່ອນໄຫວຂອງທະຫານຊາຍແດນ.

ເງື່ອນໄຂ ແລະ ມາດຕະຖານສະເພາະຂອງທະຫານຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 ການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ**

ການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ແມ່ນ ການຮັບປະກັນບໍ່ໃຫ້ມີການລະເມີດຊາຍແດນແຫ່ງຊາດ ແລະ ປົກປັກຮັກສາ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ລວມທັງການຮັບປະກັນການສ້າງຊາຍແດນແຫ່ງຊາດໃຫ້ເປັນຊາຍແດນ ແຫ່ງ ສັນຕິພາບ, ສະຖຽນລະພາບ, ມິດຕະພາບ, ການຮ່ວມມື ແລະ ການພັດທະນາແບບຍືນຍົງກັບປະເທດໃກ້ຄຽງ.

ຊາຍແດນແຫ່ງຊາດ, ຫຼັກໝາຍຊາຍແດນ ແລະ ບໍລິເວນຊາຍແດນ ຕ້ອງໄດ້ຮັບການຄຸ້ມຄອງ ແລະ ປ້ອງກັນ ຕາມກົດໝາຍສະບັບນີ້, ລະບຽບການ ກ່ຽວກັບບໍລິເວນຊາຍແດນ, ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ.

ການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ປະກອບມີ ມາດຕະການໃນການປຸກລະດົມຂົນຂວາຍມະຫາຊົນ, ດ້ານກົດໝາຍ, ການທູດ, ເສດຖະກິດ, ວິທະຍາສາດ-ເຕັກນິກ, ວິຊາສະເພາະ ແລະ ກຳລັງປະກອບອາວຸດ. ສຳລັບເນື້ອໃນ, ເງື່ອນໄຂ, ຂັ້ນຕອນ, ລະບຽບການ ສິດ ແລະ ໜ້າທີ່ ແລະ ຄວາມຮັບຜິດຊອບໃນການນຳໃຊ້ບັນດາມາດຕະການ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 28 ຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ

ການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແມ່ນ ຄວາມຮັບຜິດຊອບຂອງລັດ, ອົງການຂັ້ນສູນກາງ, ກຳລັງປະກອບອາວຸດປະຊາຊົນ, ອົງການປົກຄອງທຸກຂັ້ນ ແລະ ພົນລະເມືອງລາວທຸກຄົນ ໂດຍສະເພາະແມ່ນອົງການປົກຄອງຂັ້ນບ້ານ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ, ປະຊາຊົນຊາຍແດນ ແລະ ກຳລັງປະກອບອາວຸດປະຊາຊົນທີ່ປະຕິບັດໜ້າທີ່ ຢູ່ບໍລິເວນຊາຍແດນ ຕ້ອງມີຄວາມຮັບຜິດຊອບໂດຍກົງ ແລະ ເປັນປົກກະຕິ.

ທະຫານຊາຍແດນ ມີຄວາມຮັບຜິດຊອບໂດຍກົງ ໃນການປະສານສົມທົບກັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ, ອົງການຂັ້ນສູນກາງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ.

ກຳລັງປ້ອງກັນອາກາດ ແລະ ທະຫານອາກາດ ມີຄວາມຮັບຜິດຊອບ ໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດເທິງອາກາດ.

ກຳລັງປະກອບອາວຸດປະຊາຊົນທີ່ປະຕິບັດໜ້າທີ່ ຢູ່ບໍລິເວນຊາຍແດນ ມີຄວາມຮັບຜິດຊອບໃນການປະສານສົມທົບກັບທະຫານຊາຍແດນ, ກຳລັງປ້ອງກັນອາກາດ ແລະ ທະຫານອາກາດໃນການປ້ອງກັນຊາຍແດນແຫ່ງຊາດ.

ພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ມີພັນທະ ແລະ ຄວາມຮັບຜິດຊອບໃນການເຄົາລົບເສັ້ນຊາຍແດນແຫ່ງຊາດ; ປະຕິບັດກົດໝາຍສະບັບນີ້ ຢ່າງເຂັ້ມງວດ; ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ; ປະສານສົມທົບ ແລະ ຊ່ວຍເຫຼືອທະຫານຊາຍແດນ, ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ໃນການຕ້ານ ແລະ ສະກັດກັ້ນທຸກການກະທຳທີ່ເປັນການລະເມີດ ອະທິປະໄຕ, ດິນແດນ, ຊາຍແດນແຫ່ງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ.

ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດຂອບເຂດຄວາມຮັບຜິດຊອບ ແລະ ລະບຽບການ ກ່ຽວກັບການປະສານສົມທົບລະຫວ່າງກຳລັງທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ.

**ມາດຕາ 29 ການຄວບຄຸມ, ກວດກາ ແລະ ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ດ່ານ**

ການຄວບຄຸມ, ກວດກາ ການເຂົ້າ-ອອກ ຂອງຄົນ, ຍານພາຫະນະ, ຍານພາຫະນະການບິນ ແລະ ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ວັດຖຸພັນ ຢູ່ດ່ານ ທາງລົດ, ທາງລົດໄຟ, ທາງນ້ຳ ແລະ ທາງອາກາດ ໃຫ້ໜ່ວຍງານຄຸ້ມຄອງວິຊາການຂະແໜງການປະຈຳ ຢູ່ດ່ານ ເປັນຜູ້ດຳເນີນການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຕຳຫຼວດກວດຄົນເຂົ້າ-ອອກເມືອງ ເປັນເຈົ້າການປະສານສົມທົບກັບກອງກຳລັງທີ່ກ່ຽວຂ້ອງໃນການຄຸ້ມຄອງ, ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານຊາຍແດນ.

ໜ່ວຍງານທີ່ກ່ຽວຂ້ອງຂອງກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຈຳຢູ່ດ່ານສະໜາມບິນສາກົນ ເປັນເຈົ້າການປະສານສົມທົບກັບກອງກຳລັງທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານ.

**ມາດຕາ 30 ນະໂຍບາຍ ຮັບປະກັນໃຫ້ການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ**

ການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ໃຫ້ປະຕິບັດນະໂຍບາຍ ດັ່ງນີ້:

1. ນະໂຍບາຍຕໍ່ບຸກຄົນທີ່ຮັບຜິດຊອບໂດຍກົງ ແລະ ບຸກຄົນທີ່ປະກອບສ່ວນເຂົ້າໃນການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;
2. ນະໂຍບາຍດ້ານສັງຄົມຕໍ່ປະຊາຊົນຊາຍແດນ;
3. ນະໂຍບາຍບຸລິມະສິດ ກ່ຽວກັບການລົງທຶນພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;
4. ນະໂຍບາຍກ່ຽວກັບການຮັບປະກັນຕໍ່ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນ.

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍນະໂຍບາຍ ທີ່ໄດ້ກຳນົດໃນວັກທີໜຶ່ງ ຂອງມາດຕານີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ແລະ ສະເໜີຂໍຄຳເຫັນນຳຄະນະກຳມາທິການຊາຍແດນແຫ່ງຊາດ ກ່ອນສະເໜີ ລັດຖະບານ ພິຈາລະນາຕົກລົງ.

ສຳລັບ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພົນລະເມືອງລາວ ທີ່ບາດເຈັບ, ເສຍອົງຄະ, ເສຍສຸຂະພາບ, ເສຍສະລະຊີວິດ ຍ້ອນການປະຕິບັດໜ້າທີ່ ຫຼື ຖືກລະດົມໃຫ້ປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ ຈະໄດ້ຮັບນະໂຍບາຍອຸດໜູນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ການນຳໃຊ້ວັດຖຸປະກອນ, ພາຫະນະເຕັກນິກ, ອາວຸດ ແລະ ຍຸດໂທປະກອນ**

ກຳລັງທີ່ເຮັດໜ້າທີ່ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ສາມາດນຳໃຊ້ວັດຖຸປະກອນ, ພາຫະນະເຕັກນິກ, ອາວຸດ ແລະ ຍຸດໂທປະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ IV
# ຂໍ້ຫ້າມ

## ມາດຕາ 32 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນຍ້າຍ, ທຳລາຍ ຫຼື ເຮັດໃຫ້ ຫຼັກໝາຍຊາຍແດນແຫ່ງຊາດ ສູນຫາຍ, ເສຍຫາຍ ແລະ ເປ່ເພ; ເຮັດໃຫ້ທິດເບື້ອງຂອງເສັ້ນຊາຍແດນແຫ່ງຊາດປ່ຽນທິດ ລວມທັງເຮັດໃຫ້ແລວນ້ຳທຳມະຊາດຂອງແມ່ນ້ຳຊາຍແດນປ່ຽນແປງ;

2. ຍຸແຍ່ ຫຼື ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ; ຕັ້ງຖິ່ນຖານ ແລະ ທຳການຜະລິດ ຢູ່ບໍລິເວນຊາຍແດນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ລວມທັງທຳລາຍໂຄງການຊາຍແດນ;

3. ເຮັດໃຫ້ແຫຼ່ງນ້ຳຂອງ ແມ່ນ້ຳ ຫຼື ຫ້ວຍນ້ຳຊາຍແດນ ຕື້ນເຂີນ, ບົກແຫ້ງ, ເຮັດໃຫ້ນ້ຳຖ້ວມ ແລະ ເຮັດໃຫ້ສິ່ງແວດລ້ອມເປັນພິດ; ລັກລອບຂຸດຄົ້ນ, ທຳລາຍຊັບພະຍາກອນທຳມະຊາດ ແລະ ສ້າງຄວາມເສຍຫາຍຕໍ່ຜົນປະໂຫຍດຂອງຊາດ;

4. ເຂົ້າ-ອອກ ຜ່ານຊາຍແດນແຫ່ງຊາດ ທີ່ຜິດກົດໝາຍ; ຄ້າຂາຍເຖື່ອນ, ລັກລອບຂົນສົ່ງສິນຄ້າ, ເງິນຕາ, ອາວຸດ, ຢາເສບຕິດ ແລະ ເຄມີ ຜ່ານຊາຍແດນແຫ່ງຊາດ; ຂົນສົ່ງຜະລິດຕະພັນ ດ້ານວັດທະນະທຳທີ່ເປັນໄພຕໍ່ສັງຄົມ ແລະ ສິນຄ້າຊະນິດອື່ນ ທີ່ມີຂໍ້ຫ້າມນຳເຂົ້າ-ສົ່ງອອກ ຜ່ານຊາຍແດນແຫ່ງຊາດ;

5. ບິນລ່ວງລໍ້າເຂົ້າເຂດຫວງຫ້າມ, ຍິງ, ສົ່ງ, ປ່ອຍ ຫຼື ນຳເອົາ ຍານພາຫະນະການບິນ, ວັດຖຸ ແລະ ເຄມີ ຫຼື ມີຄວາມສ່ຽງຕໍ່ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ສຸຂະພາບຂອງຄົນ, ສິ່ງແວດລ້ອມ, ຄວາມປອດໄພທາງການບິນ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ສົນທິສັນຍາ ກ່ຽວກັບຊາຍແດນ ແລະ ລະບຽບການຊາຍແດນ.

## ມາດຕາ 33 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ຕົກລົງປ່ຽນແປງເສັ້ນຊາຍແດນແຫ່ງຊາດ ຫຼື ເຮັດໃຫ້ຊາຍແດນແຫ່ງຊາດມີການປ່ຽນແປງ ຕາມລຳພັງໃຈ;

2. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ພັກພວກຂອງຕົນ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

3. ເປີດເຜີຍຄວາມລັບ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດ;

4. ປະລະໜ້າທີ່, ເມີນເສີຍ ໃນການປະຕິບັດວຽກງານຊາຍແດນແຫ່ງຊາດ;

5. ອອກ ຄຳສັ່ງ, ລະບຽບການ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ສົນທິສັນຍາ ກ່ຽວກັບຊາຍແດນ ແລະ ລະບຽບການຊາຍແດນ.

## ພາກທີ V
## ຄະນະກຳມາທິການຊາຍແດນແຫ່ງຊາດ ແລະ ຄະນະກຳມະການຊາຍແດນຂັ້ນແຂວງ

### ມາດຕາ 34 ຄະນະກຳມາທິການຊາຍແດນແຫ່ງຊາດ

ຄະນະກຳມາທິການຊາຍແດນແຫ່ງຊາດ ແມ່ນ ການຈັດຕັ້ງບໍ່ປະຈຳການ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ປະທານປະເທດ ໃນການຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ອົງການຂັ້ນສູນກາງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ, ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ຄະນະກຳມາທິການຊາຍແດນແຫ່ງຊາດ ມີ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານປະເທດ ຕາມການສະເໜີຂອງລັດຖະບານ.

ຄະນະກຳມາທິການຊາຍແດນແຫ່ງຊາດ ມີຊື່ຫຍໍ້ວ່າ "ຄຊຊ" ແລະ ມີກາປະທັບສະເພາະ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງການ ໂດຍມີກອງເລຂາ ແລະ ຫ້ອງການກອງເລຂາ ຄະນະກຳມາທິການຊາຍແດນແຫ່ງຊາດ ເປັນເສນາທິການ ຊ່ວຍວຽກງານຂອງຕົນ.

### ມາດຕາ 35 ໂຄງປະກອບບຸກຄະລາກອນຂອງຄະນະກຳມາທິການຊາຍແດນແຫ່ງຊາດ

ຄະນະກຳມາທິການຊາຍແດນແຫ່ງຊາດ ປະກອບດ້ວຍ:

1. ນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານ;
3. ລັດຖະມົນຕີກະຊວງການຕ່າງປະເທດ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
4. ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
5. ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
6. ລັດຖະມົນຕີກະຊວງພາຍໃນ ເປັນກຳມະການ;
7. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ເປັນກຳມະການ;
8. ຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນກຳມະການ ທັງເປັນຫົວໜ້າກອງເລຂາຄະນະກຳມາທິການຊາຍແດນແຫ່ງຊາດ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງຄະນະກຳມາທິການຊາຍແດນແຫ່ງຊາດ**

ຄະນະກຳມາທິການຊາຍແດນແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການສ້າງ ແລະ ຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງການສ້າງ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ ກ່ຽວກັບຊາຍແດນ, ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ;

2. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການສ້າງ ແລະ ການຈັດຕັ້ງປະຕິບັດ ແຜນນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຊາຍແດນແຫ່ງຊາດ, ການສ້າງໂຄງການຊາຍແດນ, ໂຄງການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

3. ຊຸກຍູ້ ແລະ ປະສານສົມທົບ ກັບອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງສົນທິສັນຍາ ກ່ຽວກັບຊາຍແດນ, ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ;

4. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການຄົ້ນຄວ້າ ແລະ ການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນວຽກງານຊາຍແດນແຫ່ງຊາດ;

5. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບກະຊວງປ້ອງກັນປະເທດ ກ່ຽວກັບການກໍ່ສ້າງກຳລັງຫຼັກແຫຼ່ງທີ່ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ການຝຶກອົບຮົມ, ບຳລຸງຍົກລະດັບທາງດ້ານວິຊາສະເພາະ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ;

6. ສະເໜີລັດຖະບານ ພິຈາລະນາ ກ່ຽວກັບການແຕ່ງຕັ້ງຄະນະກຳມະການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນຂອງຝ່າຍລາວ ພ້ອມທັງຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ ການປະຕິບັດວຽກງານຂອງຄະນະກຳມະການດັ່ງກ່າວ;

7. ຊີ້ນຳ, ຕິດຕາມ ກວດກາ ຄະນະກຳມະການຊາຍແດນຂັ້ນແຂວງ ແລະ ຈັດກອງປະຊຸມພິຈາລະນາ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

8. ຊີ້ນຳ ແລະ ປະສານສົມທົບກັບອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການແກ້ໄຂບັນຫາ ຊາຍແດນ ແລະ ດິນແດນ;

9. ແຕ່ງຕັ້ງຄະນະສະເພາະກິດ ຫຼື ໜ່ວຍງານສະເພາະກິດ ເພື່ອຊ່ວຍວຽກໃນກໍລະນີຈຳເປັນ;

10. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຮ່ວມມືສາກົນ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

11. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ລັດຖະບານ ແລະ ປະທານປະເທດຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 37 ລະບອບແບບແຜນວິທີເຮັດວຽກຂອງຄະນະກຳມາທິການຊາຍແດນແຫ່ງຊາດ**

ຄະນະກຳມາທິການຊາຍແດນແຫ່ງຊາດ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງປະກອບດ້ວຍ ກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ເປີດຂຶ້ນ ໜຶ່ງຄັ້ງ ຕໍ່ປີ ໂດຍມີສະມາຊິກເຂົ້າຮ່ວມຫຼາຍກວ່າ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍໄດ້ ຖ້າມີຄວາມຈຳເປັນ ຕາມການຮຽກໂຮມຂອງປະທານຄະນະກຳມາທິການຊາຍແດນແຫ່ງຊາດ ຫຼື ຕາມການສະເໜີຂອງກຳມະການຫຼາຍກວ່າເຄິ່ງໜຶ່ງ.

ກອງປະຊຸມຄະນະກຳມາທິການຊາຍແດນແຫ່ງຊາດຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍຂອງກຳມະການທີ່ເຂົ້າຮ່ວມກອງປະຊຸມ ໃນກໍລະນີມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 38 ກອງເລຂາ ແລະ ຫ້ອງການກອງເລຂາ ຄະນະກຳມາທິການຊາຍແດນແຫ່ງຊາດ**

ກອງເລຂາຄະນະກຳມາທິການຊາຍແດນແຫ່ງຊາດ ແມ່ນ ການຈັດຕັ້ງບໍ່ປະຈຳການ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະກຳມາທິການຊາຍແດນແຫ່ງຊາດ ທັງເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້.

ກອງເລຂາຄະນະກຳມາທິການຊາຍແດນແຫ່ງຊາດ ປະກອບມີ ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການກອງເລຂາຈາກພາກສ່ວນທີ່ກ່ຽວຂ້ອງ ຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ໂດຍປະທານຄະນະກຳມາທິການຊາຍແດນແຫ່ງຊາດ.

ຫ້ອງການກອງເລຂາ ແມ່ນ ກົງຈັກທຽບເທົ່າກົມຂອງກະຊວງການຕ່າງປະເທດ ມີພາລະບົດບາດຊ່ວຍຄະນະກຳມາທິການຊາຍແດນແຫ່ງຊາດ ແລະ ກອງເລຂາຄະນະກຳມາທິການຊາຍແດນແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ. ຫ້ອງການກອງເລຂາ ມີຕາປະທັບສະເພາະ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງການ.

ຫົວໜ້າຫ້ອງການກອງເລຂາຄະນະກຳມາທິການຊາຍແດນແຫ່ງຊາດ ເປັນຮອງຫົວໜ້າກອງເລຂາ ທັງເປັນຜູ້ປະຈຳການ.

**ມາດຕາ 39 ຄະນະກຳມະການຊາຍແດນຂັ້ນແຂວງ**

ຄະນະກຳມະການຊາຍແດນຂັ້ນແຂວງ ແມ່ນ ການຈັດຕັ້ງບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ແກ່ອົງການປົກຄອງຂັ້ນແຂວງ ແລະ ຄະນະກຳມາທິການຊາຍແດນແຫ່ງຊາດ ໃນການຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ, ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ຄະນະກຳມະການຊາຍແດນຂັ້ນແຂວງ ປະກອບມີ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ຊຶ່ງຖືກ ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ.

ຄະນະກຳມະການຊາຍແດນຂັ້ນແຂວງ ມີຊື່ຫຍໍ້ວ່າ "ຄຊຂ" ແລະ ມີຕາປະທັບສະເພາະ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງການ ໂດຍມີພະແນກການຕ່າງປະເທດຂັ້ນແຂວງ ເປັນກອງເລຂາ.

**ມາດຕາ 40 ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຊາຍແດນຂັ້ນແຂວງ**

ຄະນະກຳມະການຊາຍແດນຂັ້ນແຂວງ ປະກອບດ້ວຍ:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ ເປັນກຳມະການ;
4. ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ ເປັນກຳມະການ;
5. ເຈົ້າເມືອງ, ເຈົ້ານະຄອນ ບ່ອນທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ເປັນກຳມະການ;
6. ຫົວໜ້າພະແນກພາຍໃນແຂວງ, ນະຄອນຫຼວງ ເປັນກຳມະການ;
7. ຫົວໜ້າພະແນກການຕ່າງປະເທດແຂວງ, ນະຄອນຫຼວງ ເປັນກຳມະການ ແລະ ຫົວໜ້າກອງເລຂາ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງຄະນະກຳມະການຊາຍແດນຂັ້ນແຂວງ**

ຄະນະກຳມະການຊາຍແດນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງການຈັດຕັ້ງປະຕິບັດສົນທິສັນຍາກ່ຽວກັບຊາຍແດນ, ສົນທິສັນຍາກ່ຽວກັບລະບຽບການຊາຍແດນ;

2. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຊາຍແດນແຫ່ງຊາດ, ໂຄງການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

3. ຊຸກຍູ້ ແລະ ປະສານສົມທົບ ກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ໃນການໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງສົນທິສັນຍາກ່ຽວກັບຊາຍແດນ, ສົນທິສັນຍາກ່ຽວກັບລະບຽບການຊາຍແດນຢູ່ທ້ອງຖິ່ນຂອງຕົນ;

4. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບ ກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການສ້າງບໍລິເວນຊາຍແດນໃຫ້ໝັ້ນທ່ຽງ ແລະ ເຂັ້ມແຂງ ດ້ານການເມືອງ, ເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຂອງຕົນ;

5. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບ ກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ໃນການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ ໃຫ້ໝັ້ນທ່ຽງ ແລະ ເຂັ້ມແຂງ ໂດຍສອດຄ່ອງກັບການສ້າງທ່າສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຢູ່ທ້ອງຖິ່ນຂອງຕົນ;

6. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການສ້າງແຜນການ ແລະ ຈັດສັນພູມລຳເນົາ ແລະ ອາຊີບ; ກໍ່ສ້າງໂຄງລ່າງພື້ນຖານ ແລະ ຈັດສັນການຜະລິດ ຢູ່ບໍລິເວນຊາຍແດນ; ສົມທົບແໜ້ນການພັດທະນາເສດຖະກິດ-ສັງຄົມ ກັບການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນຢູ່ທ້ອງຖິ່ນຂອງຕົນ;

7. ຊີ້ນຳການປະສານງານ ລະຫວ່າງ ກຳລັງປະກອບອາວຸດປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການປຸກລະດົມຂະບວນການຂອງປະຊາຊົນຢູ່ທ້ອງຖິ່ນ ເພື່ອປະສານສົມທົບກັບທະຫານຊາຍແດນ ໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ

ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ລວມທັງການຕ້ານ ແລະ ສະກັດກັ້ນອາຊະຍາກຳ ຢູ່ບໍລິເວນຊາຍແດນຢູ່ທ້ອງຖິ່ນຂອງຕົນ ຕາມກົດໝາຍ;

8. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຢູ່ແຕ່ລະເຂດ ເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນຢູ່ທ້ອງຖິ່ນຂອງຕົນ ດີຂຶ້ນເທື່ອລະກ້າວ;

9. ເປັນໃຈກາງປະສານງານກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການລະດົມທຶນຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ໃຫ້ການສະໜັບສະໜູນວຽກງານການ ກໍ່ສ້າງໂຄງລ່າງພື້ນຖານ, ພັດທະນາການສຶກສາ, ສາທາລະນະສຸກ, ວັດທະນະທຳ ແລະ ສັງຄົມ ຢູ່ບໍລິເວນຊາຍແດນຢູ່ທ້ອງຖິ່ນຂອງຕົນ;

10. ເປັນໃຈກາງປະສານງານກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການຂົນຂວາຍ ແລະ ຊຸກຍູ້ບັນດາການຈັດຕັ້ງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ໃຫ້ການຮ່ວມມື ແລະ ສະໜັບສະໜູນທ້ອງຖິ່ນ ຢູ່ບໍລິເວນຊາຍແດນຢູ່ທ້ອງຖິ່ນຂອງຕົນ;

11. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ອົງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຮ່ວມມືສາກົນ ກ່ຽວກັບວຽກງານຊາຍແດນແຫ່ງຊາດຢູ່ທ້ອງຖິ່ນຂອງຕົນ;

12. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ອົງການປົກຄອງຂັ້ນແຂວງ ແລະ ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 42 ລະບອບແບບແຜນວິທີເຮັດວຽກຂອງຄະນະກຳມະການຊາຍແດນຂັ້ນແຂວງ

ຄະນະກຳມະການຊາຍແດນຂັ້ນແຂວງ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງປະກອບດ້ວຍ ກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນ ເປີດຂຶ້ນ ສອງຄັ້ງ ຕໍ່ປີ ແລະ ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍໄດ້ ຖ້າມີຄວາມຈຳເປັນ ຕາມການຮຽກໂຮມຂອງປະທານຄະນະກຳມະການຊາຍແດນຂັ້ນແຂວງ ຫຼື ຕາມການສະເໜີຂອງກຳມະການຫຼາຍກວ່າເຄິ່ງໜຶ່ງ.

ກອງປະຊຸມຄະນະກຳມະການຊາຍແດນຂັ້ນແຂວງ ຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍຂອງກຳມະການທີ່ເຂົ້າຮ່ວມກອງປະຊຸມ ໃນກໍລະນີມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

### ມາດຕາ 43 ກອງເລຂາຄະນະກຳມະການຊາຍແດນຂັ້ນແຂວງ

ກອງເລຂາຂອງຄະນະກຳມະການຊາຍແດນຂັ້ນແຂວງ ແມ່ນ ພະແນກການຕ່າງປະເທດຂັ້ນແຂວງ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການຊາຍແດນຂັ້ນແຂວງ ທັງເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້.

ກອງເລຂາຂອງຄະນະກຳມະການຊາຍແດນຂັ້ນແຂວງ ນຳໃຊ້ຕາປະທັບຂອງພະແນກການຕ່າງປະເທດຂັ້ນແຂວງໃນການເຄື່ອນໄຫວວຽກງານທາງການ.

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາ ວຽກງານຊາຍແດນແຫ່ງຊາດ
## ໝວດທີ 1
## ການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ

**ມາດຕາ 44 ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການຕ່າງປະເທດ ເປັນໃຈກາງປະສານງານກັບກະຊວງ, ອົງການລັດທຽບເທົ່າກະ ຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຄຸ້ມຄອງວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ປະກອບດ້ວຍ:

1. ກະຊວງການຕ່າງປະເທດ;
2. ກະຊວງປ້ອງກັນປະເທດ;
3. ກະຊວງປ້ອງກັນຄວາມສະຫງົບ;
4. ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ.

**ມາດຕາ 45 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄົ້ນຄວ້າສະເໜີ ແນວທາງ, ນະໂຍບາຍ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຊາຍແດນແຫ່ງຊາດ ແລະ ສະເໜີຂໍ້ຄໍາເຫັນນໍາຄະນະກໍາມາທິການຊາຍແດນແຫ່ງຊາດ ກ່ອນສະເໜີລັດຖະບານ ພິຈາລະນາຕົກລົງ;

2. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຊີ້ນໍາ, ແນະນໍາອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ກ່ຽວກັບການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ;

3. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງ ແລະ ຊີ້ນໍາການຈັດຕັ້ງປະຕິບັດແຜນນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

4. ເປັນເຈົ້າການປະສານສົມທົບກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການເຈລະຈາ ເພື່ອສ້າງສົນທິສັນຍາກ່ຽວກັບຊາຍແດນ, ສົນທິສັນຍາກ່ຽວກັບລະບຽບການຊາຍແດນ ລວມທັງແກ້ໄຂບັນຫາທີ່ກ່ຽວຂ້ອງ ກັບປະເທດໃກ້ຄຽງ;

5. ເປັນເຈົ້າການປະສານສົມທົບກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສົນທິສັນຍາກ່ຽວກັບຊາຍແດນ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ;

6. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ສະເໜີສ້າງ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

7. ເປັນເຈົ້າການປະສານສົມທົບກັບອົງການຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ສະເໜີລັດຖະບານພິຈາລະນາຕົກລົງ ເປີດ, ປິດ, ຍົກລະດັບ ຫຼື ຫຼຸດລະດັບ ດ່ານຊາຍແດນ ແລະ ຈຸດຜ່ານແດນທົ່ວລາວ;

8. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດ, ອົງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ສະເໜີຄໍາເຫັນນໍາຄະນະກໍາມາທິການຊາຍແດນແຫ່ງຊາດ ກ່ຽວກັບໂຄງການຊາຍແດນທີ່ເຮັດໃຫ້ເສັ້ນຊາຍແດນແຫ່ງຊາດໝັ້ນຄົງ ເປັນຕົ້ນ ໂຄງການການສໍາຫຼວດ ແລະ ປັກຫຼັກໝາຍຊາຍແດນ, ການປັກຫຼັກໝາຍຊາຍແດນຄືນໃໝ່, ບູລະນະ, ສ້ອມແປງ ຫຼັກໝາຍຊາຍແດນ;

9. ເປັນໃຈກາງປະສານງານກັບກະຊວງປ້ອງກັນປະເທດ ເພື່ອສະເໜີຄະນະກໍາມາທິການຊາຍແດນແຫ່ງຊາດ ຊີ້ນໍາ ຫຼື ແນະນໍາ ກ່ຽວກັບການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນການເຄື່ອນໄຫວຂອງອົງການຂັ້ນສູນກາງທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງກັບຊາຍແດນແຫ່ງຊາດ, ອະທິປະໄຕ ເທິງໜ້າດິນ, ພື້ນດິນ, ປ່ານນໍ້າ ແລະ ປ່ານຟ້າຂອງ ສປປ ລາວ;

10. ເປັນໃຈກາງປະສານງານກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ໃນການໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງສົນທິສັນຍາກ່ຽວກັບຊາຍແດນ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ;

11. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການຝຶກອົບຮົມ, ບໍາລຸງຍົກລະດັບ ແລະ ແນະນໍາທະຫານຊາຍແດນ ກ່ຽວກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານຊາຍແດນແຫ່ງຊາດ ລວມທັງສົນທິສັນຍາກ່ຽວກັບຊາຍແດນ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ, ວິຊາການການທູດ ແລະ ການແກ້ໄຂບັນຫາທີ່ກ່ຽວຂ້ອງກັບຊາຍແດນແຫ່ງຊາດ, ຄົນແດນ ແລະ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;

12. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຕິດຕາມ ກວດກາ ແລະ ແກ້ໄຂຄໍາສະເໜີ ທີ່ກ່ຽວຂ້ອງກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

13. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຈັດຕັ້ງຜັນຂະຫຍາຍລະບອບນະໂຍບາຍຮັບປະກັນການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ບໍລິເວນຊາຍແດນ;

14. ເປັນໃຈກາງປະສານງານກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງໃນການ ຄົ້ນຄວ້າ, ນໍາໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນວຽກງານຊາຍແດນແຫ່ງຊາດ;

15. ຕາງໜ້າ ສປປ ລາວ ໃນສາຍພົວພັນການທູດກັບປະເທດໃກ້ຄຽງ, ບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງກັບວຽກງານຊາຍແດນແຫ່ງຊາດ;

16. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ຕໍ່ຄະນະກໍາມາທິການຊາຍແດນແຫ່ງຊາດ ແລະ ລັດຖະບານ ຢ່າງເປັນປົກກະຕິ;

17. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 46 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການຊີ້ນຳ, ແນະນຳ ອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

2. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງ ແລະ ຊີ້ນຳການຈັດຕັ້ງປະຕິບັດແຜນນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

3. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການປະຕິບັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

4. ກໍ່ສ້າງທະຫານຊາຍແດນໃຫ້ເຂັ້ມແຂງ, ຮັບປະກັນການບັນຊາຢ່າງລວມສູນ ແລະ ເປັນເອກະພາບ; ຝຶກອົບຮົມ, ບຳລຸງຍົກລະດັບວິຊາສະເພາະ, ການທູດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ລວມທັງສົນທິສັນຍາກ່ຽວກັບຊາຍແດນ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ ເພື່ອຮັບປະກັນພາລະບົດບາດການເປັນກຳລັງຫຼັກແຫຼ່ງ ໃນການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

5. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສະເໜີສ້າງ ແລະ ຈັດຕັ້ງປະຕິບັດນິຕິກຳ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

6. ເປັນເຈົ້າການຄົ້ນຄວ້າ ແລະ ສະເໜີຄະນະກຳມາທິການຊາຍແດນແຫ່ງຊາດ ຊີ້ນຳ ກ່ຽວກັບໂຄງການຊາຍແດນ ທີ່ຮັບໃຊ້ໃຫ້ແກ່ການເຄື່ອນໄຫວຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ; ການປະກອບຍານພາຫະນະ, ອຸປະກອນ, ເຕັກນິກ ແລະ ຈັດສັນທີ່ດິນ ໃຫ້ແກ່ກຳລັງຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

7. ເປັນເຈົ້າການປະສານສົມທົບກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການຈັດຕັ້ງເຜີຍແຜ່ນະໂຍບາຍ ກ່ຽວກັບການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

8. ຄົ້ນຄວ້າ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຮັບໃຊ້ໃຫ້ແກ່ວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

9. ຮ່ວມມືກັບສາກົນ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນ, ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ຕໍ່ຄະນະກຳມາທິການຊາຍແດນແຫ່ງຊາດ ແລະ ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສໍາລັບທະຫານຊາຍແດນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ວຽກງານຊາຍແດນແຫ່ງຊາດ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກະຊວງປ້ອງກັນປະເທດ ກ່ຽວກັບວຽກງານຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ແລະ ການກໍ່ສ້າງກໍາລັງທະຫານຊາຍແດນ;

2. ສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ ຕາມແຜນຍຸດທະສາດກ່ຽວກັບວຽກງານຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ແລະ ການຊີ້ນໍາຂອງກະຊວງປ້ອງກັນປະເທດ;

3. ເປັນເຈົ້າການປະສານສົມທົບກັບບັນດາອົງການ, ຂະແໜງການຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕ້ານ ແລະ ສະກັດກັ້ນທຸກການເຄື່ອນໄຫວ ທີ່ສົ່ງຜົນກະທົບຕໍ່ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຄວາມໝັ້ນຄົງຂອງຊາດ, ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

4. ຄຸ້ມຄອງ ແລະ ປົກປັກຮັກສາ ເສັ້ນຊາຍແດນແຫ່ງຊາດ, ລະບົບຫຼັກໝາຍຊາຍແດນ, ວັດຖຸທີ່ເປັນຫຼັກໝາຍຊີ້ບອກເສັ້ນຊາຍແດນແຫ່ງຊາດ, ໂຄງການຊາຍແດນ; ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ແຫຼ່ງນໍ້າ ແລະ ບັນດາແຫຼ່ງຜົນປະໂຫຍດທາງດ້ານເສດຖະກິດ ແລະ ວັດທະນະທໍາຂອງຊາດ ລວມທັງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຢູ່ບໍລິເວນຊາຍແດນ;

5. ຮ່ວມມືກັບກໍາລັງປ້ອງກັນຊາຍແດນຂອງປະເທດໃກ້ຄຽງ ໃນການຈັດຕັ້ງປະຕິບັດສົນທິສັນຍາກ່ຽວກັບລະບຽບການຊາຍແດນ;

6. ແນະນໍາອົງການຂັ້ນທ້ອງຖິ່ນ ແລະ ກໍາລັງປະກອບອາວຸດປະຊາຊົນ ໃນການສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ ຢູ່ບໍລິເວນຊາຍແດນ;

7. ເກັບກໍາ, ວິເຄາະ, ຕີລາຄາຂໍ້ມູນ ຂ່າວສານ, ຄາດຄະເນສະພາບການຊາຍແດນ ເພື່ອສະເໜີຕໍ່ຂັ້ນເທິງ;

8. ກຽມພ້ອມສູ້ຮົບ, ຕ້ານການກໍ່ກະບົດລຸກຮືຂຶ້ນດ້ວຍກໍາລັງປະກອບອາວຸດ, ສົງຄາມຮຸກຮານ ຢູ່ບໍລິເວນຊາຍແດນ;

9. ເຂົ້າຮ່ວມສ້າງຮາກຖານການເມືອງ, ຈັດສັນພູມລໍາເນົາ ແລະ ອາຊີບ, ກໍ່ສ້າງໂຄງລ່າງພື້ນຖານ, ພັດທະນາເສດຖະກິດ-ສັງຄົມ ແລະ ປະຕິບັດນະໂຍບາຍຊົນເຜົ່າ, ສາສະໜາ ຕິດພັນກັບການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນໃຫ້ເຂັ້ມແຂງ;

10. ຮັບ ແລະ ນໍາໃຊ້ຊັບພະຍາກອນມະນຸດ, ຍານພາຫະນະພົນລະເຮືອນ ເຂົ້າໃນການປະຕິບັດໜ້າທີ່ ໃນກໍລະນີທີ່ມີຄວາມຈໍາເປັນ ຍ້ອນເຫດຜົນການປ້ອງກັນຊາຍແດນແຫ່ງຊາດ;

11. ເຂົ້າຮ່ວມການຕ້ານ, ສະກັດກັ້ນ, ຕອບໂຕ້ ແລະ ຮັບມືກັບ ໄພພິບັດທໍາມະຊາດ, ອຸຕຸກະໄພ, ການປ່ຽນແປງດິນຟ້າອາກາດ, ພະຍາດຕິດຕໍ່; ຄົ້ນຫາ, ກູ້ໄພ ແລະ ຊ່ວຍເຫຼືອ ຢູ່ບໍລິເວນຊາຍແດນ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 47 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການປະຕິບັດໜ້າທີ່ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນອາຊະຍາກຳ ແລະ ການກະທຳອື່ນ ທີ່ຜິດກົດໝາຍ ຢູ່ບໍລິເວນຊາຍແດນ;

2. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ ແລະ ອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການສ້າງນິຕິກຳ ກ່ຽວກັບການປະສານງານ ລະຫວ່າງໜ່ວຍງານຄຸ້ມຄອງລັດຕາມຂະແໜງການປະຈຳຢູ່ດ່ານ ເພື່ອຄວບຄຸມ, ກວດກາການເຂົ້າ-ອອກຂອງຄົນ, ຍານພາຫະນະ ແລະ ຍານພາຫະນະການບິນ, ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ວັດຖຸພັນ ຢູ່ດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການປົກປັກຮັກສາຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານ;

4. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການສຶກສາອົບຮົມ, ບຳລຸງຍົກລະດັບວິຊາສະເພາະດ້ານວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃຫ້ແກ່ກຳລັງຮັບຜິດຊອບຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

5. ປະສານສົມທົບກັບກະຊວງປ້ອງກັນປະເທດໃນການແລກປ່ຽນສະພາບການ, ຮັບປະກັນຄວາມເປັນເອກະພາບທາງດ້ານແນວທາງໃນການຊີ້ນຳ ກ່ຽວກັບການຕ້ານ ແລະ ສະກັດກັ້ນອາຊະຍາກຳ ລວມທັງການກະທຳຜິດອື່ນ ທີ່ກ່ຽວຂ້ອງກັບການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານຊາຍແດນ ແລະ ບໍລິເວນຊາຍແດນ;

6. ຮ່ວມມືກັບສາກົນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ແລະ ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການຮ່ວມມືກັບສາກົນກ່ຽວກັບການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານຊາຍແດນ ແລະ ບໍລິເວນຊາຍແດນ;

7. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານ ຕໍ່ຄະນະກຳມາທິການຊາຍແດນແຫ່ງຊາດ ແລະ ລັດຖະບານ ຢ່າງເປັນປົກກະຕິ;

8. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບຕຳຫຼວດກວດຄົນເຂົ້າ-ອອກເມືອງ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບວຽກງານການຄຸ້ມຄອງດ່ານ, ການຄວບຄຸມ, ກວດກາການເຂົ້າ-ອອກ ດ່ານ, ການປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ເປັນເຈົ້າການໃນການລາຍງານ, ປະສານສົມທົບໂດຍກົງກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ລວມທັງກຳລັງປ້ອງກັນຊາຍແດນ ແລະ ອົງການທີ່ມີສິດທີ່ກ່ຽວຂ້ອງຂອງປະເທດໃກ້ຄຽງ ເພື່ອຮ່ວມກັນແກ້ໄຂບັນຫາທີ່ກ່ຽວກັບການຄຸ້ມຄອງ, ປ້ອງກັນ

ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນດ່ານ ພ້ອມທັງລາຍງານໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະກຳມາທິການຊາຍແດນແຫ່ງຊາດ;

3. ປະຕິບັດໜ້າທີ່ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ, ສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ເປັນພາຄີ;

4. ຮ່ວມມືກັບເຈົ້າໜ້າທີ່ດ່ານຊາຍແດນຂອງປະເທດໃກ້ຄຽງ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 48 ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ

ໃນການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງວຽກງານຊາຍແດນແຫ່ງຊາດຢູ່ທ້ອງຖິ່ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການຊີ້ນຳ, ແນະນຳຂອງກະຊວງການຕ່າງປະເທດ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ;

2. ສ້າງບໍລິເວນຊາຍແດນໃຫ້ໜັກແໜ້ນ ແລະ ເຂັ້ມແຂງ ດ້ານການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ສ້າງທ່າສະໜາມປ້ອງກັນຊາຍແດນທົ່ວປວງຊົນ ໃຫ້ໜັກແໜ້ນ ແລະ ເຂັ້ມແຂງ ໂດຍສອດຄ່ອງກັບການສ້າງທ່າສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຢູ່ທ້ອງຖິ່ນຂອງຕົນ;

4. ສ້າງແຜນການ ແລະ ຈັດສັນພູມລຳເນົາ ແລະ ອາຊີບ; ກໍ່ສ້າງໂຄງລ່າງພື້ນຖານ ແລະ ຈັດສັນການຜະລິດ ຢູ່ບໍລິເວນຊາຍແດນ; ສົມທົບແໜ້ນການພັດທະນາເສດຖະກິດ-ສັງຄົມ ກັບການເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບໍລິເວນຊາຍແດນ;

5. ຊີ້ນຳກຳລັງປະກອບອາວຸດປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ປຸກລະດົມຂະບວນການຂອງປະຊາຊົນຢູ່ທ້ອງຖິ່ນ ເພື່ອປະສານສົມທົບກັບທະຫານຊາຍແດນ ໃນການຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ລວມທັງການຕ້ານ ແລະ ສະກັດກັ້ນອາຊະຍາກຳ ຢູ່ບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ປະສານສົມທົບກັບກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຢູ່ແຕ່ລະເຂດ ເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ ດີຂຶ້ນເທື່ອລະກ້າວ;

7. ປະສານສົມທົບກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການລະດົມທຶນຈາກຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວຢູ່ບໍລິເວນຊາຍແດນ ໃຫ້ການສະໜັບສະໜູນວຽກງານການ ກໍ່ສ້າງໂຄງລ່າງພື້ນຖານ, ພັດທະນາການສຶກສາ, ສາທາລະນະສຸກ, ວັດທະນະທຳ ແລະ ສັງຄົມ ຢູ່ບໍລິເວນຊາຍແດນ;

8. ປະສານສົມທົບກັບອົງການຂັ້ນສູນກາງທີ່ກ່ຽວຂ້ອງ ໃນການຂົນຂວາຍ ແລະ ຊຸກຍູ້ບັນດາອົງການຈັດຕັ້ງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ເພື່ອໃຫ້ການຮ່ວມມື ແລະ ສະໜັບສະໜູນທ້ອງຖິ່ນ ຢູ່ບໍລິເວນຊາຍແດນ.

9. ຈັດຕັ້ງການໂຄສະນາ ເຜີຍແຜ່, ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

10. ຮ່ວມມືກັບອົງການປົກຄອງທ້ອງຖິ່ນຂອງປະເທດໃກ້ຄຽງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສົນທິສັນຍາກ່ຽວກັບລະບຽບການຊາຍແດນ;

11. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

12. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບອົງການຄຸ້ມຄອງວຽກງານຊາຍແດນແຫ່ງຊາດ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

## ໝວດທີ 2
## ການກວດກາ ວຽກງານຊາຍແດນແຫ່ງຊາດ

**ມາດຕາ 50 ອົງການກວດກາ**

ອົງການກວດກາວຽກງານຊາຍແດນແຫ່ງຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 51 ເນື້ອໃນການກວດກາ**

ການກວດກາວຽກງານຊາຍແດນແຫ່ງຊາດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

2. ການ ນຳໃຊ້ສິດ, ປະຕິບັດໜ້າທີ່, ພັນທະ ແລະ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

3. ການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊາຍແດນແຫ່ງຊາດ;

4. ການນຳໃຊ້ງົບປະມານ ເຂົ້າໃນວຽກງານຊາຍແດນແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການປະຈໍາ ແລະ ມີກໍານົດເວລາແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານຊາຍແດນແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ງົບປະມານ

**ມາດຕາ 53 ງົບປະມານ**

ລັດຖະບານ ຈັດສັນງົບປະມານທີ່ເໝາະສົມ ແລະ ຮັບປະກັນໃຫ້ແກ່ວຽກງານຊາຍແດນແຫ່ງຊາດ.

ແຫຼ່ງງົບປະມານສໍາລັບວຽກງານຊາຍແດນແຫ່ງຊາດ ມີ ດັ່ງນີ້:

1. ງົບປະມານຂອງລັດ;

2. ແຫຼ່ງລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 54 ການນໍາໃຊ້ງົບປະມານ**

ອົງການຂັ້ນສູນກາງ ນໍາໃຊ້ງົບປະມານບ່ວງຂອງສູນກາງ ເຂົ້າໃນວຽກງານຊາຍແດນແຫ່ງຊາດ.

ອົງການປົກຄອງທ້ອງຖິ່ນ ນໍາໃຊ້ງົບປະມານບ່ວງຂອງທ້ອງຖິ່ນ ເຂົ້າໃນວຽກງານຊາຍແດນແຫ່ງຊາດ.

ງົບປະມານສໍາລັບວຽກງານຊາຍແດນແຫ່ງຊາດ ໃຫ້ນໍາໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

2. ການສ້າງໂຄງການຊາຍແດນ;

3. ການຄຸ້ມຄອງ, ປ້ອງກັນຊາຍແດນ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

4. ການປະຕິບັດລະບອບນະໂຍບາຍ ຕໍ່ບຸກຄົນທີ່ຮັບຜິດຊອບໂດຍກົງ ແລະ ບຸກຄົນທີ່ປະກອບສ່ວນເຂົ້າໃນການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ;

5. ການປະຕິບັດລະບອບນະໂຍບາຍທົດແທນຄືນ ສໍາລັບຊັບສິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເສຍຫາຍ ຫຼື ເປ່ເພຈາກການ ລະດົມ, ເກັບເກນ, ເຊົ່າ ຫຼື ເໝົາຊື້ຂອງອົງການທີ່ມີສິດ ໃນກໍລະນີທີ່ມີຄວາມຈໍາເປັນຍ້ອນເຫດຜົນການປ້ອງກັນຊາຍແດນແຫ່ງຊາດ.

ສໍາລັບລາຍລະອຽດ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ເຂົ້າໃນວຽກງານຊາຍແດນແຫ່ງຊາດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 55 ການສ້າງແຜນ, ຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານເຂົ້າໃນວຽກງານຊາຍແດນແຫ່ງຊາດ**

ການສ້າງແຜນ, ຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເຂົ້າໃນວຽກງານຊາຍແດນແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ການຈັດສັນ, ຄຸ້ມຄອງ, ນຳໃຊ້ ແລະ ສະຫຼຸບງົບປະມານ ກ່ຽວກັບວຽກງານຊາຍແດນແຫ່ງຊາດຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍ ແລະ ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 58 ວັນຊາຍແດນແຫ່ງຊາດ**

ລັດ ກຳນົດເອົາວັນທີ 12 ຕຸລາ ເປັນວັນຊາຍແດນແຫ່ງຊາດ. ໃນແຕ່ລະປີ ຕ້ອງຈັດຕັ້ງສະເຫຼີມສະຫຼອງໃນຂອບເຂດທົ່ວປະເທດ.

ຄະນະກຳມາທິການຊາຍແດນແຫ່ງຊາດ ຊີ້ນຳ, ແນະນຳອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການຈັດຕັ້ງສະເຫຼີມສະຫຼອງວັນຊາຍແດນແຫ່ງຊາດ.

**ມາດຕາ 59 ການນຳໃຊ້ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ, ກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ**

ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ກຳນົດຫຼັກການພື້ນຖານ ໃຫ້ແກ່ບົດບັນຍັດຂອງກົດໝາຍອື່ນກ່ຽວກັບວຽກງານຊາຍແດນແຫ່ງຊາດ.

ຖ້າກົດໝາຍອື່ນທີ່ກ່ຽວຂ້ອງ ຫາກຂັດກັບກົດໝາຍສະບັບນີ້ ໃຫ້ນຳໃຊ້ກົດໝາຍສະບັບນີ້.

ຖ້າກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ຫາກບໍ່ໄດ້ກຳນົດບັນຫາສະເພາະໃດໜຶ່ງ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ໃຫ້ນຳໃຊ້ບົດບັນຍັດຂອງກົດໝາຍທີ່ກຳນົດກ່ຽວກັບບັນຫາສະເພາະນັ້ນ.

ຖ້າກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຫາກບໍ່ໄດ້ກຳນົດບັນຫາສະເພາະໃດໜຶ່ງ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ຫຼື ມີບົດບັນຍັດກຳນົດທີ່ແຕກຕ່າງກັບສົນທິສັນຍາ ກ່ຽວກັບຊາຍແດນແຫ່ງຊາດ, ສົນທິສັນຍາ ກ່ຽວກັບລະບຽບຊາຍແດນ ແລະ ສົນທິສັນຍາອື່ນທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ເປັນພາຄີ ໃຫ້ນຳໃຊ້ສົນທິສັນຍານັ້ນ.

**ມາດຕາ 60 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 61 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**